**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**
*********************************

**ຮຽນ**: ທ່ານປະທານສານປະຊາຊົນນະຄອນຫຼວງ
**ເລື່ອງ**: ຮ້ອງຂໍຄວາມເປັນທຳອີງຕາມລັດຖະທຳມະນູນ ສປປ ລາວປີ 2003 ມາດຕາ 6

ຂ້າພະເຈົ້ານາງອຶງ ຊຸຍມິງ ເປັນພັນລະຍາຂອງທ້າວ ສົມບັດ ສົມພອນ, ປະຈຸບັນຢູ່ບ້ານ ໂຄກນົກເມືອງ ສີສັດຕະນາກ ແຂວງ ນະຄອນຫຼວງວຽງຈັນ ໄດ້ຂຽນໃບຄຳຮ້ອງສະບັບນີ້ຂຶ້ນມາເພື່ອຮ້ອງຂໍຄວາມເປັນທຳນຳທ່ານປະທານສານປະຊາຊົນນະຄອນຫຼວງ ເລື່ອງການຄຸ້ມຄອງສິດຂອງສາມີຂ້າພະເຈົ້າ, ພາຍໃຕ້ລັດຖະທາມະນູນສປປລາວ ມາດຕາ6. ເຊິ່ງຜູ້ກ່ຽວໄດ້ຫາຍຕົວໄປໃນວັນທີ 15 ທັນວາ 2012 ທີ່ນະຄອນຫຼວງວຽງຈັນແລະກຳລັງຢູ່ໃນຂະບວນການສືບສວນສອບສວນຂອງຫ້ອງການຕຳຫຼວດນະຄອນຫຼວງວຽງຈັນແຕ່ວັນທີ 16 ທັນວາ 2012 ເປັນຕົ້ນມາ. ແຕ່ມາຮອດປັດຈຸບັນ ຄະດີການຫາຍຕົວໄປຂອງສາມີຂ້າພະເຈົ້າໄດ້ຖືກລ່ວງລະເມີດສິດດ້ວຍການກະທຳແບບອາດຍາສິດ ເຊິ່ງສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງຕໍ່ຊີວິດ, ກຽດສັກສີ,ແລະ ຈິດໃຈຂອງສາມີຂ້າພະເຈົ້າ.

**ຂໍ້ເທັດຈິງກ່ຽວກັບສາມີຂ້າພະເຈົ້າ ແລະ ເຫດການການຫາຍຕົວໄປມີລາຍລະອຽດດັ່ງນີ້:**

1. ທ້າວ ສົມບັດ ສົມພອນ , ອາຍຸ 62 ປີ ແມ່ນຄົນສັນຊາດລາວ. ຂ້າພະເຈົ້າໄດ້ແຕ່ງງານກັບລາວຕັ້ງແຕ່ວັນທີ 26/07/1983. ນັບຕັ້ງແຕ່ປີ 1986 ເປັນຕົ້ນມາ ພວກຂ້າພະເຈົ້າໄດ້ຍ້າຍມາອາໃສຢູ່ນະຄອນຫຼວງວຽງຈັນ.
2. ໃນປີ 1996 ທ.ສົມບັດໄດ້ຮັບໃບອະນຸຍາດຈາກກະຊວງສຶກສາທິການເພື່ອກໍ່ຕັ້ງສູນອົບຮົມຮ່ວມພັດທະນາ (PADETC ຫຼື ສູນປາແດກ ) ເພື່ອຈັດຝຶກອົບຮົມໃຫ້ແກ່ໄວໜຸ່ມ ແລະ ພະນັກງານລັດໃນທ້ອງຖິ່ນ ດ້ານການພັດທະນາແບບມີສ່ວນຮ່ວມຈາກຊຸມຊົນ.
3. ປີ 2001, ທ.ສົມບັດ ໄດ້ຮັບລາງວັນພັດທະນາຊັບພະຍາກອນມະນຸດ(The Human Resource Development Award)ຈາກອົງການສະຫະປະຊາຊາດເພື່ອເສດຖະກິດ ແລະ ສັງຄົມອາຊີ ແລະ ປາຊີຟິກ (UNESCAP) ຕໍ່ມາ ໃນປີ 2005 ໄດ້ຮັບລາງວັນອັນຊົງຄຸນຄ່າກໍຄື ລາງວັນຣາມອນແມັກໄຊໄຊ (Ramon Magsaysay)ສາຂາຜູ້ນຳພາຊຸມຊົນ ເຊິ່ງເປັນທີ່ຍອມຮັບໃນດ້ານ "ຄວາມມຸ່ງໝັ້ນຕັ້ງໃຈໃນການສົ່ງເສີມການພັດທະນາແບບຍືນຍົງໃນລາວ ໂດຍການຝຶກອົບຮົມ ແລະ ສົ່ງເສີມໄວໜຸ່ມໃຫ້ກາຍເປັນຄົນຮຸ່ນໃໝ່ທີ່ມີຄວາມຄວາມຮັບຜິດຊອບ ແລະເປັນເຈົ້າການ"

4. ວັນເສົາ ທີ 15 ທັນວາ 2012, ເວລາ 17 ໂມງ 30ນາທີ, ສາມີຂ້າພະເຈົ້າໄດ້ເດີນທາງອອກຈາກຫ້ອງການສູນອົບຮົມຮ່ວມພັດທະນາ ເຊິ່ງເປັນກິດຈະກຳປົກກະຕິທີ່ລາວຫຼິ້ນກິລາປິງປອງຢູ່ຫ້ອງການ ແລະ ແວ່ເຂົ້າເມືອງເພື່ອພົບຂ້າພະເຈົ້າກ່ອນກັບບ້ານເພື່ອກິນເຂົ້າແລງນຳກັນ. ພວກເຮົາໄດ້ຂັບລົດຄົນລະຄັນໂດຍຂ້າພະເຈົ້າໄດ້ຂັບລົດນຳໜ້າໄປກ່ອນ ແລະ ລາວໄດ້ຂັບລົດຈິບສີຂຽວ ປ້າຍທະບຽນ ກກ 2624 ຕາມຫຼັງຂ້າພະເຈົ້າ.

5. ຂ້າພະເຈົ້າໄດ້ເມືອຮອດເຮືອນເວລາ 18 ໂມງ15ນາທີ ແລະ ໄດ້ລໍຖ້າສາມີຂອງຂ້າພະເຈົ້າກັບມາກິນເຂົ້າ , ແຕ່ເບິ່ເຫັນລາວກັບມາເຮືອນເລີຍໃນມື້ນັ້ນ. ຂ້າພະເຈົ້າມີຄວາມກັງວົນຕໍ່ຊາຕາຊີວິດຂອງເພິ່ນ ແລະ ຫຼາຍ

ສາວຂອງພວກເຮົາໄດ້ຂັບລົດອອກໄປຊອກຫາຜູ່ກ່ຽວທົ່ວເມືອງ ແລະ ໄດ້ໄປສອບຖາມຕາມໂຮງໝໍແຫ່ງຕ່າງໆ ແຕ່ກໍບໍ່ພົບເຫັນຜູ້ກ່ຽວແຕ່ຢ່າງໃດເລີຍ.

6. ໃນວັນທີ 16 ທັນວາ 2012 (ວັນອາທິດ), ພວກຂ້າພະເຈົ້າໄດ້ໄປແຈ້ງຄົນຫາຍຢູ່ທີ່ຫ້ອງການບ້ານໂຄກນິນ, ຫ້ອງການຕາຫຼວດເມືອງສີສັດຕະນາກ , ແລະຫ້ອງການຕຳຫຼວດນະຄອນຫຼວງ (ເອກະສານແຈ້ງຄົນຫາຍ)

7. ໃນວັນທີ 17 ທັນວາ 2012 (ວັນຈັນ) ພວກຂ້າພະເຈົ້າໄດ້ສະເໜີຂໍເບິ່ງພາບບັນທຶກກ້ອງວົງຈອນປິດຈາກຫ້ອງການຕຳຫຼວດນະຄອນຫຼວງ ເພື່ອເບິ່ງພາບບັນທຶກໃນຕອນແລງຂອງມື້ທີ່ສາມີຂ້າພະເຈົ້າຫາຍຕົວໄປ. ຫ້ອງການຕຳຫຼວດໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ ໂດຍໄດ້ອະນຸຍາດໃຫ້ເຂົ້າເບິ່ງພາບບັນທຶກຈາກກ້ອງວົງຈອນປິດ ແລະ ພວກຂ້າພະເຈົ້າໄດ້ເຫັນໃນພາບບັນທຶກວ່າສາມີຂອງຂ້າພະເຈົ້າໄດ້ຖືກຕຳຫຼວດເອີ້ນໃຫ້ຢຸດລົດ ຢູ່ປ້ອມຕຳຫຼວດຫຼັກ 3 ຖະໜົນທ່າເດື່ອ.(ພາບບັນທຶກ)

8. ໃນພາບບັນທຶກກ້ອງວົງຈອນປິດ ໄດ້ປາກົດໃຫ້ເຫັນເຫດການວ່າ ໃນເວລາ 18:03ນາທີ ຕອນແລງທ. ສົມບັດໄດ້ຖືກເອີ້ນໃຫ້ຈອດລົດ. ເຫັນວ່າລາວຍ່າງລົງຈາກລົດຈິບຂອງຕົນເອງ ແລ້ວຍ່າງໄປຫາຕຳຫຼວດຢູ່ປ້ອມຕຳຫຼວດ. ຫຼັງຈາກນັ້ນບໍ່ດົນ, ມີຜູ້ຊາຍນິລະນາມຂັບລົດຈັກມາຈອດຢູ່ໃນບໍລິເວນນັ້ນ. ຜູ້ຊາຍຄົນນັ້ນໄດ້ຈອດລົດຈັກໄວ້ໜ້າລົດຈິບຂອງສາມີຂອງຂ້າພະເຈົ້າ ແລະ ໄດ້ແລ່ນໄປປ້ອມຕຳຫຼວດ. ຫຼັງຈາກນັ້ນ ບໍ່ເທົ່າໃດນາທີພາບທີ່ປາກົດໃຫ້ເຫັນແມ່ນຜູ້ຊາຍຄົນດັ່ງກ່າວອອກມາຈາກປ້ອມຕຳຫຼວດແລ້ວໄດ້ຂັບເອົາລົດຈິບຂອງສາມີຂ້າພະເຈົ້າໄປເວລາຕໍ່ມາ ມີລົດກະບະສີຂາວເປີດໄຟຂໍທາງມາຈອດຢູ່ໜ້າປ້ອມຕຳຫຼວດດັ່ງກ່າວ. ໃນພາບບັນທຶກ , ຂ້າພະເຈົ້າເຫັນວ່າມີຜູ້ຊາຍຈຳນວນໜຶ່ງທີ່ບໍ່ສາມາດລະບຸໄດ້ ແລະ ສາມີຂ້າພະເຈົ້າພາກັນຮີບຮ້ອນຂຶ້ນລົດກະບະຄັນສີຂາວດັ່ງກ່າວ. ຫຼັງຈາກນັ້ນ ລົດກະບະຄັນດັ່ງກ່າວກໍໄດ້ຂັບອອກໄປຢ່າງຮີບຮ້ອນ, ຕາມດ້ວຍຜູ້ຊາຍຂີ່ລົດຈັກນາຫຼັງສອງຄົນ.

9. ເມື່ອໄດ້ເຫັນພາບເຫດການໃນຂໍ້ 8 ແລ້ວພວກຂ້າພະເຈົ້າໄດ້ຂໍໃຫ້ເຈົ້າໜ້າທີ່ຍ້ອນພາບກັບໄປອີກ ແລະ ໄດ້ຂໍທາງເຈົ້າໜ້າທີ່ບັນທຶກເອົາແຟມພາບດັ່ງກ່າວດ້ວຍການໃຊ້ກ້ອງຖາຍວິດີໂອທົ່ວໄປມາເກັບໄວ້ເພາະທາງຕຳຫຼວດຜູ້ປະຈຳການບອກວ່າມັນບໍ່ສາມາດບັນທຶກໄດ້ໂດຍກົງຈາກໜ່ວຍຄອມພິວເຕີ.(CD ບັນທຶກພາບໄດ້ຄັດຕິດມານີ້)

10. ຫຼັງຈາກທີ່ໄດ້ພາບບັນທຶກດັ່ງກ່າວ, ຂ້າພະເຈົ້າໄດ້ຕິດຕໍ່ຫາທ່ານນາງ ຄຳເພົາ ເອີນທະວັນ ຫົວໜ້າສະຖາບັນການຕ່າງປະເທດຢ່າງຮີບດ່ວນເພື່ອແຈ້ງຂ່າວເລື່ອງສາມີຂອງຂ້າພະເຈົ້າວ່າໄດ້ຖືກເອົາຕົວໄປທີ່ປ້ອມຕຳຫຼວດ. ຂ້າພະເຈົ້າໄດ້ເດີນທາງໄປກະຊວງການຕ່າງປະເທດທັນທີທັນໃດ ພ້ອມທັງເອົາແຜ່ນ CD ທີ່ບັນທຶກພາບເຫດການໄປໃຫ້ທ່ານນາງ ຄຳເພົາແລະ ເພິ່ນກໍໄດ້ນຳເອົາແຜ່ນ CD ໄປສາຍໃຫ້ຫົວໜ້າຂອງເພິ່ນເບິ່ງທັນທີ.

11. ນັບແຕ່ມື້ທີ່ຂ້າພະເຈົ້າໄດ້ແຈ້ງຄົນຫາຍໄວ້ທີ່ຫ້ອງການຕຳຫຼວດນະຄອນຫຼວງ, ຂ້າພະເຈົ້າໄດ້ຮັບກ້ານເຊີນຈາກຫ້ອງການຕຳຫຼວດຈຳນວນ 3 ຄັ້ງ (ວັນທີ16/1/2013; 8/2/2013; 24/4/2013) ໃນການໄປຫ້ອງການຕຳຫຼວດແຕ່ລະຄັ້ງ ເຈົ້າໜ້າທີ່ສອບສວນ ໄດ້ຖາມຄຳຖາມຫຼັກໆກ່ຽວກັບຊີວະປະຫວັດຂອງຂ້າພະເຈົ້າ ແລະ ສາມີຂ້າພະເຈົ້າ, ແລະ ຍາດພີ່ນ້ອງຂອງລາວ, ແລະ ເຮົາສອງຄົນຮູ້ຈັກກັນໄດ້ແນວໃດ ແລະ ພວກເຮົາແຕ່ງງານກັນຢູ່ໃສ ແລະ ອື່ນໆ.

12. ຕັ້ງແຕ່ ທ. ສົມບັດ ໄດ້ຫາຍຕົວໄປ ຈົນຮອດປັດຈຸບັນເປັນເວລາ 8 ເດືອນກວ່າແລ້ວ ລັດຖະບານ ສປປ ລາວໄດ້ອອກຖະແຫຼງການຢ່າງເປັນທາງການ 3 ສະບັບ ເພື່ອແຈ້ງໃຫ້ສາທາລະນະຮູ້ເຖິງຄວາມຄືບໜ້າຂອງຄະດີ ໂດຍມີເນື້ອໃນດັ່ງນີ້:

(i) ໃນວັນທີ 19 ທັນວາ 2013 ໂຄສົກສະຖານີໂທລະພາບລາວໄດ້ອອກຂ່າວຖະແຫຼງການສູ່ສາທາລະນະວ່າການສືບສວນສອບສວນກໍາລັງຖືກດໍາເນີນໄປ ແລະ ສາເຫດຂອງການຫາຍຕົວໄປອາດຈະຍ້ອນ"ຂໍ້ຂັດແຍ່ງສ່ວນຕົວ ຫຼື ຂໍ້ຂັດແຍ່ງທາງທຸລະກິດ." ໂດຍບໍ່ມີຄວາມຄືບໜ້າກ່ຽວກັບຄະດີແຕ່ຢ່າງໃດເລີຍ. (ເອກະສານຄັດຕິດ)

(ii) ໃນວັນທີ 4 ມັງກອນ 2013ຜູ້ຕາງໜ້າ ຂອງລັດຖະບານລາວ ປະຈໍາສະຫະປະຊາຊາດ ທີ່ນະຄອນເຈັນເນວາ, ປະເທດ ສວິດເຊີແລນດ໌, ໄດ້ຊີ້ແຈງວ່າຂະບວນການສືບສວນສອບສວນກໍາລັງຖືກດໍາເນີນໄປຢ່າງເລັ່ງດ່ວນ ແຕ່ກໍບໍ່ມີຂໍ້ມູນຄວາມຄືບໜ້າກ່ຽວກັບຄະດີແຕ່ຢ່າງໃດ.

(iii) ໃນວັນທີ 11 ມັງກອນ 2013 ການລາຍງານຄັ້ງທໍາອິດຂອງຕໍາຫຼວດໄດ້ສະຫຼຸບວ່າ ບໍ່ພົບເຫັນຕົວບຸກຄົນ ຫຼື ລົດທີ່ເຫັນໃນພາບບັນທຶກກ້ອງວົງຈອນປິດແຕ່ຢ່າງໃດເລີຍ. ໄດ້ມີການສອບຖາມຕໍາຫຼວດຈາລະຈອນຢູ່ປ້ອມຕໍາຫຼວດດັ່ງກ່າວ ແຕ່ໄດ້ຮັບການຢືນຢັນວ່າສະຖານະການໃນຕອນແລງວັນທີ 15 ທັນວາ 2012 ແມ່ນປົກກະຕິ. ຍັງບໍ່ມີພະຍານຜູ້ໃດເຂົ້າໄປໃຫ້ຂໍ້ມູນກັບຕໍາຫຼວດແຕ່ຢ່າງໃດ.(ເອກະສານຄັດຕິດ)

(iv) ວັນທີ 17 ມັງກອນ 2012 ທ່ານ ພົງສະຫວັດ ບຸບຜາ ໄດ້ຊີ້ແຈງຕໍ່ຄະນະຜູ້ແທນອາຊຽນ ໂດຍໄດ້ປະຕິເສດວ່າລັດຖະບານບໍ່ມີສ່ວນກ່ຽວຂ້ອງໃດໆ ແລະ ໄດ້ຊີ້ແຈງວ່າ ທ້າວ ສົມບັດ ບໍ່ແມ່ນກໍລະນີທໍາອິດທີ່ຫາຍຕົວໄປໃນ ສປປ ລາວ. (ເອກະສານຄັດຕິດ)

(v) ໃນວັນທີ 2 ມີນາ 2013 ຖະແຫຼງການສະບັບທີ 2 ໄດ້ ລາຍງານກ່ຽວກັບຄະດີດັ່ງກ່າວ. ທ່ານ ພັນເອກ ດຣ. ເພັງສະຫວັນ ທິບວົງໄຊ ໄດ້ຊີ້ແຈງວ່າລົດຈີບບໍ່ໄດ້ຖືກພົບເຫັນ.ບໍ່ມີຂໍ້ມູນຄືບໜ້າຂະຫຍາຍຜົນຈາກພາບບັນທຶກຈາກກ້ອງວົງຈອນປິດດັ່ງກ່າວ. ທ່ານ ພັນເອກ ດຣ. ເພັງສະຫວັນຍັງໄດ້ແຈ້ງວ່າໄດ້ມີການແຈ້ງຕໍາຫຼວດສາກົນ ASEANPOL ແລະ INTERPOL. ພ້ອມດຽວກັນໄດ້ໃຫ້ຄໍາອະທິບາຍວ່າພາບບັນທຶກຈາກກ້ອງວົງຈອນປິດບໍ່ແຈ້ງ ແລະ ບໍ່ສາມາດຂາຍຫຍາຍພາບເຂົ້າອອກໄດ້ ແຕ່ໃນເວລາດຽວກັນກໍແຈ້ງວ່າ ສປປ ລາວບໍ່ມີຄວາມຈໍາເປັນທີ່ຈະຂໍຄວາມຊ່ວຍເຫຼືອຈາກພາຍນອກໃນການສືບສວນສອບສວນ (ເອກະສານຄັດຕິດ)

(vi) ໃນວັນທີ 6 ມິຖຸນາ 2013 ໄດ້ມີຖະແຫຼງການສະບັບທີ 3 ຂອງຕໍາຫຼວດ ໂດຍ ພັນເອກ ດຣ. ເພັງສະຫວັນ ທິບວົງໄຊ ໄດ້ຊີ້ແຈງວ່າທາງເຈົ້າໜ້າທີ່ໄດ້ຕິດຕໍ່ປະເທດຕ່າງໆ ເພື່ອກວດສອບວ່າ ສົມບັດ ສົມພອນໄດ້ເຂົ້າໄປປະເທດໃດແດ່ໃນໄລຍະຜ່ານມາ ແລະ ໄດ້ຮັບການຕອບກັບຈາກປະເທດເກົາຫຼີວ່າສົມບັດໄດ້ອອກຈາກປະເທດເກົາຫຼີແລ້ວຕັ້ງແຕ່ວັນທີ 9 ພະຈິກ 2012 ເພື່ອໄປປະເທດໄທ. ສ່ວນປະເທດອື່ນໆ ເຊັ່ນ ຍີ່ປຸ່ນແລະ ອິນເດຍ ກໍຍັງຄົງຕິດຕໍ່ເພື່ອສືບຫາຂໍ້ມູນເພີ່ມເຕີມ.

**ອີງຕາມຂໍ້ມູນຂ້າງເທິງ, ຂ້າພະເຈົ້າເຫັນວ່າຕາຫຼວດນະຄອນຫຼວງບໍ່ໄດ້ເຮັດໜ້າທີ່ຢ່າງເຕັມເມັດເຕັມໜ່ວຍໃນການຊອກຫາຕົວສາມີຂອງຂ້າພະເຈົ້າ ເຊິ່ງມັນເປັນການສະແດງອອກເຖິງການກະທໍາແບບອາດຍາສິດ ແລະ ຍ້ອນການປະຕິບັດດັ່ງກ່າວ, ເຮັດໃຫ້ຊີວິດ ແລະ ຈິດໃຈຂອງສາມີຂ້າພະເຈົ້າ, ທ້າວ ສົມບັດ ສົມພອນ, ຕົກຢູ່ໃນອັນຕະລາຍຫຼາຍ. ໂດຍສະເພາະການທີ່ຫ້ອງການຕໍາຫຼວດນະຄອນຫຼວງໄດ້ມີກະທໍາແບບອາດຍາສິດ ດັ່ງນີ້**

- ຂາດຄວາມຈິງຈັງແລະຕໍ່ເນື່ອງທີ່ຈະຂະຫຍາຍຜົນການສອບສວນກັບຕໍາຫຼວດ (ທີ່ເປັນພິຍານໃນເຫດການ) ທີ່ກາລັງປະຕິບັດໜ້າທີ່ຢູ່ປ້ອມຕາຫຼວດຫຼັກ 3 ຖະໜົນທ່າເດື່ອ ໃນມື້ ແລະ ໃນຊ່ວງເວລາທີ່ສາມີຂ້າໄປເຈົ້າຫາຍຕົວໄປ;

- ຖ້າຫາກວ່າໄດ້ມີການສອບຖາມຂະຫຍາຍຜົນກັບຕຳຫຼວດດັ່ງກ່າວແລ້ວ, ຕາຫຼວດນະຄອນຫຼວງກໍບໍ່ມີບັນທຶກລາຍລະອຽດການຕອບຄຳຖາມຈາກຕຳຫຼວດຜູ້ທີ່ເປັນພິຍານເຫດການດັ່ງກ່າວ;
- ຂາດຂໍ້ມູນທີ່ກະຈ່າງແຈ້ງທັງໝົດທີ່ກ່ຽວຂ້ອງໂດຍການປະຕິເສດການຊ່ວຍເຫຼືອຈາກພາຍນອກໃນການກວດສອບພາບບັນທຶກກ້ອງວົງຈອນປິດທີ່ໄດ້ມາ;
- ບົກພ່ອງໃນການຮວບຮວມຫຼັກຖານປະກອບການດຳເນີນການສອບສວນທີ່ໜ້າເຊື່ອຖືທີ່ສາມາດນຳໄປສູ່ການບົ່ງຕົວຜູ້ໜ້າສົງໄສໄດ້
- ບົກພ່ອງໃນການລະບຸຕົວຜູ້ຮັບຜິດຊອບທີ່ຢູ່ເບື້ອງຫຼັງການຫາຍຕົວໄປຂອງສາມີຂ້າພະເຈົ້າ.

ໃນມາດຕາ 6 ຂອງລັດຖະທຳມະນູນ ສປປ ລາວ ໄດ້ລະບຸໄວ້ວ່າ: "*ຫ້າມທຸກການກະທຳແບບອາດຍາສິດ, ຂົ່ມຂູ່ອັນຈະກໍ່ຄວາມເສຍຫາຍເຖິງກຽດ, ສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດຂອງປະຊາຊົນ.*"

**ດັ່ງຂໍ້ເທັດຈິງໃນເບື້ອງຕົ້ນທີ່ໄດ້ກ່າວມາຂ້າງເທິງ,ຂ້າພະເຈົ້າອ້ອນວອນຮ້ອງຂໍຄວາມເປັນທຳຈາກທ່ານປະທານສານປະຊາຊົນນະຄອນຫລວງດັ່ງນີ້:**

- ອອກຄຳສັ່ງຕໍ່ຕຳຫຼວດນະຄອນຫຼວງດຳເນີນການສືບສວນສອບສວນກໍລະນີການຫາຍຕົວໄປຂອງສາມີຂ້າພະເຈົ້າຢ່າງຈິງຈັງ ແລະ ຮີບດ່ວນ;
- ອອກຄຳສັ່ງໃຫ້ຕຳຫຼວດນະຄອນຫຼວງຍອມຮັບຄຳສະເໜີຮັບເອົາຄວາມຊ່ວຍເຫຼືອຈາກພາຍນອກ(ຕົວຢ່າງເຊັ່ນ: ການກວດສອບພາບບັນທຶກກ້ອງວົງຈອນປິດ) ເພື່ອຮີບຮ້ອນຮວບຮວມພະຍານຫຼັກຖານທີ່ຈະນຳໄປສູ່ການຄົ້ນຫາຕົວສາມີຂອງຂ້າພະເຈົ້າ;
- ອອກຄຳສັ່ງໃຫ້ຕຳຫຼວດນະຄອນຫຼວງວຽງຈັນໃຫ້ເປີດເຜີຍຂໍ້ມູນຄວາມຄືບໜ້າໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ໃຫ້ແກ່ຂ້າພະເຈົ້າ, ຜູ້ເປັນພັນລະຍາ ແລະ ແລະໃນຖານະຍາດພີ່ນ້ອງຂອງ ທ້າວ ສົມບັດ ສົມພອນ; ແລະ
- ອອກຄຳສັ່ງໃຫ້ມີການປ່ອຍຕົວສາມີຂ້າພະເຈົ້າ ຖ້າຫາກວ່າມີການຄົ້ນພົບວ່າຜູ້ກ່ຽວຖືກກັກຂັງໂດຍບຸກຄົນໃດໜຶ່ງ ຫຼື ໜ່ວຍງານໃດໜຶ່ງ ທີ່ລວມທັງຢູ່ພາຍໃຕ້ອົງການລັດຖະບານໃດໜຶ່ງ.

ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ບ້ານໂຄກນິນ, ວັນທີ...4..../...9../2013

ຜູ້ຮ້ອງຂໍ

ນາຍບ້ານ

ນາຍບ້ານ
ບ້ານ
ໂຄກນິນ

ສີສຸພັນ ສິງຫາລາດ